ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ເຈົ້າແຂວງ

ເລກທີ.524/ຈຂ.ບກ
ແກ້ວ, ວັນທີ..30/05/2023

## ຂໍ້ຕົກລົງ
## ວ່າດ້ວຍ ການປັບລາຄາ
## ຄ່າບໍລິການເກັບມ້ຽນຂີ້ເຫຍື້ອ ຢູ່ໃນຕົວເມືອງຫ້ວຍຊາຍ ແຂວງບໍ່ແກ້ວ

- ອີງຕາມ ຂໍ້ຕົກລົງເຈົ້າແຂວງ ແຂວງບໍ່ແກ້ວ, ສະບັບເລກທີ 844/ຈຂ.ບກ, ລົງວັນທີ 4 ຕຸລາ 2022 ວ່າດ້ວຍ ການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າການກະຊວງການເງິນ ສະບັບເລກທີ 2083/ກງ, ລົງວັນທີ 8 ຕຸລາ 2002 ວ່າດ້ວຍການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ.
- ອີງຕາມ ໜັງສືສະເໜີຂອງ ອພບຕ ສະບັບເລກທີ 30/ອພບຕ, ລົງວັນທີ 17 ມັງກອນ 2023. ຂໍປັບຂຶ້ນລາຄາ ຄ່າບໍລິການເກັບມ້ຽນຂີ້ເຫຍື້ອ ຢູ່ໃນຕົວເມືອງຫ້ວຍຊາຍ ແຂວງບໍ່ແກ້ວ.

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງ ແລະ ບໍລິການເກັບມ້ຽນຂີ້ເຫຍື້ອ ໄດ້ຮັບການຈັດຕັ້ງປະຕິບັດ ມີປະສິດທິພາບ, ປະສິດທິຜົນສູງ ທັງຮັບປະກັນໃຫ້ມີຄວາມຍືນຍົງ ແລະ ໃຫ້ທຸກພາກສ່ວນໃນສັງຄົມມີສ່ວນຮ່ວມປະກອບສ່ວນພັນທະຄ່າບໍລິການຂີ້ເຫຍື້ອ ແລ້ວນຳເອົາຄ່າບໍລິການດັ່ງກ່າວມາໝູນໃຊ້ເຂົ້າໃນການບໍລິຫານວຽກງານຕ່າງໆ ຢ່າງຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນສູງ.

### ເຈົ້າແຂວງ ຕົກລົງ :

**ມາດຕາ 1** ເຫັນດີ ໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເປັນຜູ້ຈັດເກັບ ແລະ ຄຸ້ມຄອງແຫຼ່ງລາຍຮັບທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງຂອງເຈົ້າແຂວງ ແຂວງບໍ່ແກ້ວ, ສະບັບເລກທີ 1069/ຈຂ-ບກ, ລົງວັນທີ 30 ທັນວາ 2020 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ແຂວງບໍ່ແກ້ວ ໂດຍສະເພາະແມ່ນການເກັບຄ່າບໍລິການເກັບມ້ຽນຂີ້ເຫຍື້ອ ໃນຄັ້ງນີ້, ເຊິ່ງມີລາຍລະອຽດ ແຕ່ລະເນື້ອໃນ, ແຕ່ລະລະດັບຂອງຜູ້ໃຊ້ບໍລິການຂີ້ເຫຍື້ອດັ່ງຕໍ່ໄປນີ້:

| ລ/ດ | ເນື້ອໃນລາຍຮັບ | ລາຄາເກົ່າ/ກີບ/ເດືອນ | ລາຄາໃໝ່/ກີບ/ເດືອນ |
|---|---|---|---|
| I | ຄ່າບໍລິການການເກັບມ້ຽນຂີ້ເຫຍື້ອ | | |
| 1 | ປະເພດຄົວເຮືອນ | | |
| | -ຄົວເຮືອນພະນັກງານ, ທະຫານຕຳຫຼວດ ແລະ ປະຊາຊົນທີ່ບໍ່ມີທຸລະກິດ | 15,000 | 20,000 |
| | -ຄົວເຮືອນພະນັກງານ, ທະຫານ, ຕຳຫຼວດ ແລະ | 20,000 | 25,000 |

| | | | |
|---|---|---|---|
| | ປະຊາຊົນທີ່ມີທຸລະກິດ | | |
| 2 | ປະເພດສຳນັກງານອົງການ | | |
| | -ພະແນກ, ອົງການຕ່າງໆ | 50,000 | 55,000 |
| | -ຫ້ອງການ | 40,000 | 45,000 |
| 3 | ບັນດາຫົວໜ່ວຍທຸລະກິດ | | |
| 3,1 | ລັດວິສາຫະກິດຕ່າງໆ | | |
| | -ລັດວິສາຫະກິດນ້ຳປະປາ | 50,000 | 60,000 |
| | - ລັດວິສາຫະກິດໂທລະຄົມມະນາຄົມ | 50,000 | 60,000 |
| | -ລັດວິສາຫະກິດນ້ຳມັນເຊື້ອໄຟ | 50,000 | 60,000 |
| | -ລັດວິສາຫະກິດພັດທະນາກະສິກຳ | 50,000 | 60,0000 |
| | -ບັນດາລັດວິສາຫະກິດຕ່າງໆ | 50,000 | 60,000 |
| 3,2 | ໂຮງຮຽນ, ໂຮງໝໍ, ຄຼີນິກ ແລະ ສູນຝຶກ (ພາກເອກະຊົນ) | | |
| | -ໂຮງຮຽນອະນຸບານ,ປະຖົມ ແລະ ໂຮງຮຽນມັດທະຍົມ | 100,000 | 120,000 |
| | -ໂຮງຮຽນອະນຸບານ | 80,000 | 90,000 |
| | -ໂຮງຮຽນວິຊາຊີບ, ວິທະຍາໄລພາກເອກະຊົນ | 250,000 | 300,000 |
| | -ໂຮງໝໍເອກະຊົນ | 250,000 | 260,000 |
| | -ຄຼີນິກຕ່າງໆ | 40,000 | 50,000 |
| | -ສູນຝຶກຕ່າງໆ | 50,000 | 60,000 |
| 3,3 | ບໍລິສັດຕ່າງໆ | | |
| | -ບໍລິສັດຂະໜາດໃຫຍ່ | 50,000 | 55,000 |
| | -ບໍລິສັດຂະໜາກກາງ | 40,000 | 45,000 |
| | -ບໍລິສັດຂະໜາດນ້ອຍ | 30,000 | 35,000 |
| 3,4 | ໂຮງແຮມ-ເຮືອນພັກຕ່າງໆ | | |
| | -ໂຮງແຮມ 5 ດາວ | 400,000 | 420,000 |
| | -ໂຮງແຮມ 3 ດາວ | 300,000 | 320,000 |
| | -ໂຮງແຮມ ( 20ຫ້ອງຂຶ້ນໄປ ) | 150,000 | 180,000 |
| | - ເຮືອນພັກ ( 12 ຫ້ອງ-20ຫ້ອງ ) | 100,000 | 120,000 |
| | -ເຮືອນພັກ ( 12ຫ້ອງລົງມາ ) | 80,000 | 100,000 |
| 3,5 | ບັນດາຣີສອດ-ຫ້ອງແຖວຕ່າງໆ | | |
| | -ຣີສອດ ໃຫຍ່ | 150,000 | 180,000 |
| | -ຣີສອດ ກາງ | 100,000 | 150,000 |
| | -ຣີສອດ ນ້ອຍ | 60,000 | 100,000 |
| | -ຫ້ອງແຖວ ( 10ຫ້ອງຂຶ້ນໄປ ) | 10,000ກີບ/ຫ້ອງ | 120,000 |
| | -ຫ້ອງແຖວ ( 10ຫ້ອງລົງມາ ) | 10,000ກີບ/ຫ້ອງ | 100,000 |
| 3,6 | ຮ້ານອາຫານ, ກິນດື່ມຕ່າງໆ | | |

| | | | |
|---|---|---|---|
| | -ຮ້ານອາຫານ (ຮ້ານໃຫຍ່ ) | 100,000 | 120,000 |
| | -ຮ້ານອາຫານ (ຮ້ານກາງ ) | 80,000 | 100,000 |
| | -ຮ້ານອາຫານ (ຮ້ານນ້ອຍ ) | 50,000 | 60,000 |
| 3,7 | **ຮ້ານອາຫານບັນເທີງ ແລະ ຄາລາໂອເກະ** | | |
| | -ຮ້ານບັນເທີງ ແລະ ຄາລາໂອເກະ ໃຫຍ່ | 100,000 | 120,000 |
| | -ຮ້ານບັນເທີງ ແລະ ຄາລາໂອເກະ ກາງ | 60,000 | 70,000 |
| | -ຮ້ານບັນເທີງ ແລະ ຄາລາໂອເກະ ນ້ອຍ | 40,000 | 50,000 |
| 3,8 | **ຮ້ານຂາຍເຝີ-ເຂົ້າປຽກ, ເຂົ້າຊອຍ, ເຂົ້າປຸ້ນ** | | |
| | -ຮ້ານຂາຍເຝີ-ເຂົ້າປຽກ, ເຂົ້າຊອຍ, ເຂົ້າປຸ້ນ | 50,000 | 55,0000 |
| | -ຮ້ານຂາຍເຝີ-ເຂົ້າປຽກ, ເຂົ້າຊອຍ, ເຂົ້າປຸ້ນ | 20,000 | 25,000 |
| 3,9 | **ຮ້ານຂາຍລົດໃຫຍ່ທົ່ວໄປ** | | |
| | -ຂາຍລົດໃຫຍ່ຄົບວົງຈອນ ໃຫຍ່ | 60,000 | 65,000 |
| | -ຂາຍລົດໃຫຍ່ຄົບວົງຈອນ ກາງ | 50,000 | 55,000 |
| | -ຂາຍລົດໃຫຍ່ຄົບວົງຈອນ ກາງ | 40,000 | 45,000 |
| 3,10 | **ອູ່ສ້ອມແປງລົດໃຫຍ່ທົ່ວໄປ** | | |
| | -ອູ່ສ້ອມແປງລົດໃຫຍ່ຄົບວົງຈອນ ໃຫຍ່ | 60,000 | 65,000 |
| | -ອູ່ສ້ອມແປງລົດໃຫຍ່ຄົບວົງຈອນ ກາງ | 40,000 | 50,000 |
| | -ອູ່ສ້ອມແປງລົດໃຫຍ່ຄົບວົງຈອນ ນ້ອຍ | 30,000 | 40,000 |
| 3,11 | **ຮ້ານຂາຍ ແລະ ອູ່ສ້ອມແປງລົດຈັກ** | | |
| | -ຮ້ານຂາຍ ແລະ ສ້ອມແປງລົດຈັກ ໃຫຍ່ | 40,000 | 45,000 |
| | -ຮ້ານຂາຍ ແລະ ສ້ອມແປງລົດຈັກ ກາງ | 30,000 | 35,000 |
| | -ຮ້ານຂາຍ ແລະ ສ້ອມແປງລົດຈັກ ນ້ອຍ | 20,000 | 25,000 |
| 3,12 | **ໂຮງຈັກ, ໂຮງງານຕ່າງໆ** | | |
| | -ໂຮງງານປະກອບລົດ | 100,000 | 120,000 |
| | -ໂຮງງານຜະລິດເຫຍື່ອເບັດ, ກະເປົາ | 50,000 | 80,000 |
| | -ໂຮງງານນໍ້າດື່ມ | 50,000 | 60,000 |
| | -ໂຮງງານຂ້າສັດ | 40,000 | 50,000 |
| | -ໂຮງງານຜະລິດເຫຼົ້າທົ່ວໄປ | 40,000 | 50,000 |
| 13 | **ໂຕແທນຈໍາໜ່າຍເຄື່ອງອຸປະໂພກ ແລະ ບໍລິໂພກ** | | |
| | -ຕົວແທນຈໍາໜ່າຍເຄື່ອງດື່ມ | 80,000 | 90,000 |
| | -ຕົວແທນຈໍາໜ່າຍອາຫານ | 40,000 | 50,000 |
| | -ໂຕແທນຈໍາໜ່າຍວັດສະດຸກໍ່ສ້າງ, ເຄື່ອງຟຊ້ໄຟຟ້າ, ເຝີນິເຈີ | 40,000 | 50,000 |
| 3,14 | **ປໍ້ານໍ້າມັນຕ່າງໆ** | | |
| | -ປໍ້າບໍລິການຂາຍນໍ້າມັນ | 50,000 | 60,000 |
| 15 | **ບໍລິການແບບພິເສດ** | | |
| | -ດູດສ້ວມຕໍ່ຖ້ຽວ | 600,000 | 750,000 |
| | -ດູດນໍ້າເປື້ອນ ຫຼື ນໍ້າເສຍຕ່າງໆ ຕໍ່ຖ້ຽວ | 300,000 | 380,000 |

| | | | |
|---|---|---|---|
| | -ຂີ້ເຫຍື້ອງານແຕ່ງດອງ, ກິນທານ ແລະ ອື່ນໆ (ຕໍ່ຖົງວ) | 200,000 | 250,000 |

**ມາດຕາ 2** ໃຫ້ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໃຫ້ສອດຄ່ອງກັບ ລະບຽບ, ກົດໝາຍ, ບັນດາລາຍຮັບທີ່ກຳນົດໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເກັບບໍ່ໃຫ້ຊ້ຳຊ້ອນກັບ ລາຍຮັບຈາກພາກສ່ວນອື່ນ ແລະ ນຳໃຊ້ງົບປະມານດັ່ງກ່າວ ເຂົ້າໃນການບໍລິຫານວຽກຕ່າງໆ ທີ່ກ່ຽວພັນເຖິງວຽກເກັບມ້ຽນຂີ້ເຫຍື້ອດັ່ງນີ້:

1). ຈ່າຍເປັນຄ່າແຮງງານກຳມະກອນບໍລິການເກັບມ້ຽນຂີ້ເຫຍື້ອ ແລະ ບູລະນະຮັກສາສວນສາທາລະນະໃນແຕ່ລະເດືອນ.

2). ຈ່າຍຊື້ນ້ຳມັນເຊື້ອໄຟ ເພື່ອຮັບໃຊ້ ເຂົ້າໃນວຽກງານບໍລິການເກັບມ້ຽນຂີ້ເຫຍື້ອ.

3). ຈ່າຍເຂົ້າໃນການຊື້ອາໄຫຼ່, ການສ້ອມແປງພາຫະນະ, ອັດຕາກິນ ແລະ ເງິນນະໂຍບາຍທີ່ຈຳເປັນໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ຂອງພະນັກງານ ນອກໂມງການ.

4).ນຳໃຊ້ເຂົ້າໃນການບໍລິການ ແລະ ການສ້າງຕົວເມືອງຫ້ວຍຊາຍ ໃຫ້ມີຄວາມສະອາດ, ສວຍງາມ ແລະ ເປັນລະບຽບຮຽບຮ້ອຍດີ.

**ມາດຕາ 3** ມອບໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງ ສ້າງລະບຽບການຄຸ້ມຄອງລາຍຈ່າຍໃຫ້ສອດຄ່ອງ ແລະ ເໝາະສົມກັບສະພາບຕົວຈິງ, ການໃຊ້ຈ່າຍແຕ່ລະໄລຍະໃຫ້ມີການສະຫຼຸບລາຍງານໃຫ້ຂັ້ນເທິງເປັນແຕ່ລະເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ສະຫຼຸບເປັນປີ.

**ມາດຕາ 4** ມອບໃຫ້ ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ພະແນກການທີ່ກ່ຽວຂ້ອງຂອງແຂວງ, ເມືອງຫ້ວຍຊາຍ ແລະ ບັນດາບ້ານໃນຕົວເມືອງຫ້ວຍຊາຍ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ຖືກຕ້ອງຕາມລະບຽບການຢ່າງເຂັ້ມງວດ ທັງໃຫ້ໄດ້ຮັບຜົນດີ.

**ມາດຕາ 5** ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 119/ຈຂ.ບກ, ລົງວັນທີ 12 ກຸມພາ 2014 ແລະ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ,

ເຈົ້າແຂວງ ແຂວງບໍ່ແກ້ວ

ປອ ບົວຄົງ ນາມມະວົງ